ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 1264 /ອຄ.ຄພນ.

ນະຄອນຫຼວງວຽງຈັນ, ວັນທີ 27 JUN 2012

# ແຈ້ງການ

## ວ່າດ້ວຍ ກຳນົດລາຍການສິນຄ້າ ແລະ ການບໍລິການ ຄວບຄຸມລາຄາ ຂອງບັນດາຂະແໜງການກ່ຽວຂ້ອງ.

- ອີງຕາມ ດຳລັດ, ສະບັບເລກທີ 552/ນຍ, ລົງວັນທີ 23/12/2011, ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ;
- ອີງຕາມ ດຳລັດ ວ່າດ້ວຍການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ, ເລກທີ 474/ນຍ, ລົງວັນທີ 18/11/2010;
- ອີງຕາມ ການປະສານສົມທົບ ແລະ ເອກະພາບກັບຂະແໜງການກ່ຽວຂ້ອງ.

ເພື່ອອຳນວຍຄວາມສະດວກໃນການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ ແລະ ໃຫ້ສັງຄົມຮັບຮູ້ວ່າລາຄາສິນຄ້າ ແລະ ຄ່າບໍລິການໃດຂຶ້ນກັບການຄຸ້ມຄອງຂອງຂະແໜງການທີ່ກ່ຽວຂ້ອງໃດນັ້ນ,

**ລັດຖະມົນຕີວ່າການ ກະຊວງອຸດສາຫະກຳ ແລະ ການຄ້າ ອອກແຈ້ງການ ດັ່ງນີ້:**

1. ລາຍການສິນຄ້າ ແລະ ການບໍລິການຄວບຄຸມລາຄາ ທີ່ຂຶ້ນກັບການຄຸ້ມຄອງຂອງແຕ່ລະຂະແໜງການກ່ຽວຂ້ອງແມ່ນໄດ້ລະບຸໄວ້ໃນເອກະສານຊ້ອນທ້າຍ ບັນຊີ "ກ" ຂອງແຈ້ງການສະບັບນີ້;
2. ລາຍການສິນຄ້າ ແລະ ການບໍລິການຄວບຄຸມລາຄາ ໝາຍເຖິງ ລາຍການສິນຄ້າທີ່ມີຄວາມອ່ອນໄຫວສູງ, ມີຄວາມຈຳເປັນ ແລະ ມີຜົນກະທົບໄວຕໍ່ຊີວິດການເປັນຢູ່ຂອງປະຊາຊົນ ແລະ ການພັດທະນາເສດຖະກິດ-ສັງຄົມ;
3. ລາຍການສິນຄ້າ ແລະ ການບໍລິການຄວບຄຸມລາຄາ ຕາມ ບັນຊີ "ກ", ບັນດາຂະແໜງການກ່ຽວຂ້ອງ ສາມາດເພີ່ມ ຫຼື ຫຼຸດ ຕາມຄວາມເໝາະສົມ ແລະ ຄວາມຈຳເປັນໃນແຕ່ລະໄລຍະ;
4. ການ ເພີ່ມ ຫຼື ຫຼຸດ ບັນຊີລາຍການສິນຄ້າ ແລະ ການບໍລິການຄວບຄຸມລາຄາ ຕາມ ບັນຊີ "ກ" ແມ່ນຕ້ອງໄດ້ຮັບອະນຸຍາດກ່ອນ;
5. ອົງການຄຸ້ມຄອງລາຄາຂອງແຕ່ລະຂະແໜງການ ແລະ ແຕ່ລະຂັ້ນ ຕ້ອງເປັນເຈົ້າການເຜີຍແຜ່, ແນະນຳ, ຕິດຕາມ, ກວດກາ ແລະ ຈັດຕັ້ງປະຕິບັດການຄຸ້ມຄອງລາຄາຕາມທີ່ໄດ້ກຳນົດໄວ້ໃນແຈ້ງການສະບັບນີ້;
6. ລາຍການສິນຄ້າ ແລະ ການບໍລິການ ທີ່ບໍ່ໄດ້ກຳນົດໄວ້ໃນເອກະສານຊ້ອນທ້າຍ ບັນຊີ "ກ" ຂອງແຈ້ງການສະບັບນີ້ແມ່ນບໍ່ນອນຢູ່ໃນບັນຊີຄວບຄຸມລາຄາ, ແຕ່ອາດຢູ່ໃນລາຍການຕິດຕາມ

ການເໜັງຕີງຂອງລາຄາ, ຊຶ່ງສາມາດເອົາເຂົ້າໃນລາຍການຄວບຄຸມລາຄາໄດ້ໃນກໍລະນີຈໍາເປັນ ຕາມດໍາລັດຂອງນາຍົກລັດຖະມົນຕີ, ເລກທີ 474/ນຍ, ລົງວັນທີ 18/11/2010;

7. ແຈ້ງມາຍັງທຸກພາກສ່ວນທີ່ກ່ຽວຂ້ອງ, ບັນດາກະຊວງ, ອົງການທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ຈົ່ງຮັບຮູ້ ແລະ ໃຫ້ການຮ່ວມມືໃນການຈັດຕັ້ງປະຕິບັດແຈ້ງການສະບັບນີ້ຕາມພາລະບົດບາດຂອງໃຜລາວຢ່າງເຂັ້ມງວດ;

8. ແຈ້ງການສະບັບນີ້ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການ

ກະຊວງອຸດສາຫະກໍາ ແລະ ການຄ້າ,

ດຣ. ນາມ ວິຍະເກດ